ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**
**BANQUE POUR LE COMMERCE EXTERIEUR LAO PUBLIC**

ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສໍານັກງານໃຫຍ່

ເລກທີ: 070 /ທຄຕລ 2020
ນະຄອນຫຼວງວຽງຈັນ, ວັນທີ: 03 SEP 2020

**ໜັງສືແຈ້ງເຊີນຍື່ນເອກກະສານເພື່ອຄັດເລືອກດ້ານຄຸນວຸດທິ**

**ເຖິງ** : ບັນດາບໍລິສັດຮັບເໝົາກໍ່ສ້າງ, ສ້ອມແປງ ແລະ ຕົບແຕ່ງ.

**ເລື່ອງ**: ແຈ້ງເຊີນຍື່ນເອກກະສານສະເໜີຄຸນວຸດທິເພື່ອຄັດເລືອກບໍລິສັດຮັບເໝົາກໍ່ສ້າງ Data Center.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍຖືເປັນກຽດແຈ້ງເຊີນມາຍັງບັນດາບໍລິສັດຮັບເໝົາກໍ່ສ້າງ, ສ້ອມແປງ ແລະ ຕົບແຕ່ງ ທີ່ມີຄວາມສົນໃຈ ສະເໜີຄຸນວຸດທິຂອງບໍລິສັດ ເພື່ອຄັດເລືອກເປັນບໍລິສັດຮັບເໝົາກໍ່ສ້າງ ສູນສໍາຮອງຂໍ້ມູນຂອງ ທຄຕລ (Data Center) ຕັ້ງຢູ່ບ້ານໂພນປ່າເປົ້າ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ ເຊິ່ງການຄັດເລືອກຈະດໍາເນີນເປັນ 2 ຂັ້ນຕອນ: ຂັ້ນຕອນທີ 1 ຈະຄັດເລືອກດ້ານຄຸນວຸດທິ ຂອງບໍລິສັດທີ່ຄົບເງື່ອນໄຂ ແລະ ຂັ້ນຕອນທີ 2 ບໍລິສັດທີ່ໄດ້ຖືກຄັດເລືອກ ທຄຕລ ຈະແຈ້ງຍື່ນສະເໜີລາຄາປະມູນ ລາຍລະອຽດດັ່ງນີ້:

1. ການຄັດເລືອກບໍລິສັດ ຈະດໍາເນີນຕາມຂັ້ນຕອນການປະມູນເປີດກ້ວາງທີ່ໄດ້ກໍານົດໄວ້ຢູ່ໃນລະບຽບກໍ່ສ້າງ, ສ້ອມແປງ ແລະ ຕົບແຕ່ງ ທຄຕລ ສະບັບເລກທີ: 29/ທຄຕລ.2020, 12/6/2020.
2. ບໍລິສັດທີ່ມີຄວາມສົນໃຈ ສາມາດພົວພັນເອົາເອກກະສານ ແລະ ລາຍລະອຽດການແຈ້ງເຊີນທີ່ພະແນກຫ້ອງການບໍລິຫານ-ການເງິນ ທຄຕລ ສໍານັກງານໃຫຍ່ (ຊັ້ນ 4 ຕຶກ C) ເລີ່ມວັນທີ 03/09/2020, ເວລາ 08:30 - 16:00 ລາຍລະອຽດເອກກະສານປະກອບມີດັ່ງນີ້:
   ກ. ຈົດໝາຍເຊີນ ແລະ ເງື່ອນໄຂການປະກວດດ້ານຄຸນວຸດທິ.
   ຂ. ຂໍ້ກໍານົດທົ່ວໄປ.
   ຄ. ເອກກະສານເພີ່ມເຕີມ : Application Form, Preliminary Data, Confidential Agreement.
3. ບໍລິສັດຕ້ອງຍື່ນຊອງເອກກະສານສ່ວນທີ 1 ທີ່ພະແນກຫ້ອງການບໍລິຫານ-ການເງິນ (ຊັ້ນ 4 ຕຶກ C) ທຄຕລ ສໍານັກງານໃຫຍ່ ກ່ອນວັນທີ: 02/10/2020 ປິດຮັບເວລາ 16:00 ໂມງ ແລະ ຈະແຈ້ງຜົນການຄັດເລືອກບໍລິສັດພາຍໃນ 1 ເດືອນພາຍຫຼັງມື້ປິດຮັບ. ຖ້າວ່າບໍລິສັດຜ່ານການຄັດເລືອກດ້ານຄຸນວຸດທິແລ້ວແມ່ນ ທຄຕລ ແຈ້ງໃຫ້ຊື້ແບບ ແລະ ຊອງປະມູນສ່ວນທີ 2 ມູນຄ່າ 15.000.000 ກີບ/ຊຸດ ວິທີການຊໍາລະຈ່າຍເປັນເງິນສົດ ຫຼື ເປັນເງິນໂອນ.
4. ບໍລິສັດທີ່ມີຄວາມຕ້ອງການຊື້ຊອງສ່ວນທີ 1 ຕ້ອງເປັນບໍລິສັດທີ່ມີໃບອະນຸຍາດດໍາເນີນທຸລະກິດ, ໃບຢັ້ງຢືນການເສຍອາກອນປີປະຈຸບັນຖືກຕ້ອງຕາມລະບຽບກົດໝາຍທີ່ກ່ຽວຂ້ອງກັບການກໍ່ສ້າງ, ທຶນຈົດທະບຽນຢ່າງຕໍ່າ 3 ຕື້ກີບ ລາຍລະອຽດໄດ້ອະທິບາຍໃນເອກກະສານ TOR ດ້ານຄຸນວຸດທິບັນຈຸໃນຊອງ.
5. ບໍລິສັດຕ້ອງມີຜົນງານການກໍ່ສ້າງອາຄານ Data center ຫຼືເຄີຍມີຜົນງານໃນລັກສະນະດຽວກັນກັບໂຄງການນີ້ມູນຄ່າບໍ່ໜ້ອຍກ່ວາ 30 ຕື້ກີບ ແລະ ວຽກກໍ່ສ້າງສໍາເລັດບໍ່ເກີນ 5 ປີ ຕ້ອງນໍາເອກກະສານສັນຍາ ຫຼື ໜັງສືຮັບຮອງຜົນງານມາສະແດງ.
6. ບໍລິສັດຕ້ອງມີຖານະການເງິນຍ້ອນຫຼັງ 3 ປີ ໂດຍສະແດງເຖິງຖານະການເງິນກໍາໄລ-ຂາດທຶນ.
7. ສາມາດສອບຖາມລາຍລະອຽດເພີ່ມເຕີມ ກ່ຽວກັບການປະກອບເອກກະສານ ແລະ ເຕັກນິກການກໍ່ສ້າງກ່ອນການຍື່ນຊອງຈາກວັນທີ 03/09/2020 - 02/10/2020 ໃນຊ່ວງເວລາ 8:30 - 11:30 ໂມງ

ແລະ 13:30 - 16:30 ໂມງ ທີ່ໝາຍເລກໂທລະສັບ 020 55522448, 020 77467722. ນອກຈາກເວລາດັ່ງກ່າວແລ້ວ ທຄຕລ ຈະຂໍສະຫງວນສິດໃນການຕອບຄຳຖາມໃດໆ ທັງໝົດ.

ດັ່ງນັ້ນ ຈຶ່ງແຈ້ງເຊີນມາຍັງບັນດາ ບໍລິສັດ ເພື່ອຮັບຊາບ ແລະ ຕ້ອງການຍື່ນຊອງເອກກະສານທີ່ກ່າວມາຂ້າງເທິງນີ້.

**<u>ຜູ້ອຳນວຍການໃຫຍ່</u>**

**<u>ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ</u>**

ພູຊົງ ຈັນທະຈັກ